# ສປປ ລາວ ເປັນເຈົ້າພາບຈັດກອງປະຊຸມ ປະຈຳປີຄັ້ງທີ 41 ຂອງສະມາຄົມທະນາຄານອາຊຽນ



ມື້ອື່ນນີ້ກອງປະຊຸມສະມາຄົມທະນາຄານອາຊຽນ ປະຈຳປີຄັ້ງທີ 41 ກໍຈະເປີດຂຶ້ນຢ່າງເປັນທາງການ ທີ່ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ ແລະ ໃນຕອນເຊົ້າມື້ນີ້ (17 ພະຈິກ) ກໍໄດ້ມີການທົບທວນການເຄື່ອນໄຫວໃນໄລຍະຜ່ານມາ ແລະ ກຳນົດບາດກ້າວການເຄື່ອນໄຫວໃນຕໍ່ໜ້າຂອງສະມາຄົມທະນາຄານອາຊຽນ ໂດຍການເຂົ້າຮ່ວມຂອງຜູ້ແທນກອງປະຊຸມຈາກ 10 ປະເທດສະມາຊິກອາຊຽນ, ໃນມື້ທຳອິດໄດ້ມີການດຳເນີນກອງປະຊຸມຂອງ 3 ຄະນະກຳມະການ: ຄະນະກຳມະການຮ່ວມມືການຄ້າ ແລະ ການລົງທຶນ, ຄະນະກຳມະການການສຶກສາ ແລະ ພັດທະນາການທະນາຄານ ແລະ ຄະນະກຳມະການພົວພັນສາກົນ.

ສຳລັບຄະນະກຳມະການຮ່ວມມືໃນການການຄ້າ ແລະ ການລົງທຶນ ໄດ້ມີການປຶກສາຫາລື ກ່ຽວກັບການຮ່ວມມືທາງດ້ານການຄ້າ, ການລົງທຶນ ແລະ ການຊຳລະສະສາງລະຫວ່າງປະເທດ ສະມາຊິກອາຊຽນ, ໃນດ້ານຄະນະກຳມະການການພັດທະນາການສຶກສາດ້ານການພັດທະນາໄດ້ມີ ການປຶກສາຫາລືກ່ຽວກັບວຽກງານການພັດທະນາ ແລະ ຍົກລະດັບບຸກຄະລາກອນໃນຂະແໜງ ການທະນາຄານຂອງບັນດາປະເທດສະມາຊິກອາຊຽນດ້ວຍກັນ ໃນຮູບແບບການຈັດກອງປະຊຸມ, ຝຶກອົບຮົມ, ສຳມະນາ, ທັດສະນະສຶກສາ ແລະ ປ່ຽນປະສົບການຊຶ່ງກັນ ແລະ ກັນພາຍໃນ ສະມາຊິກສະມາຄົມທະນາຄານອາຊຽນ.

ໃນດ້ານຄະນະກຳມະການພົວພັນສາກົນ ໄດ້ມີການປຶກສາຫາລືກ່ຽວກັບພົວພັນແລກປ່ຽນ ບົດຮຽນ ແລະ ປະສົບການຂອງສະມາຄົມທະນາຄານອາຊຽນກັບຂົງເຂດອື່ນ, ເພື່ອນຳເອົາບົດ ຮຽນ, ປະສົບການ ແລະ ຄວາມຮູ້ຂອງສະມາຄົມທະນາຄານໃນຂົງເຂດອື່ນມາປຽບທຽບ, ໝູນໃຊ້ ແລະ ພັດທະນາວຽກງານຂອງສະມາຄົມທະນາຄານອາຊຽນໃຫ້ນັບມື້ນັບດີຂຶ້ນທຽບເທົ່າກັນສາກົນ.